**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

**ເຈົ້າແຂວງ**

ເລກທີ: 85 /ຈຂ.ບກ

ບໍ່ແກ້ວ, ວັນທີ: 07 ກຸມພາ 2018.

# ຄຳສັ່ງ
## ຂອງເຈົ້າແຂວງ ແຂວງບໍ່ແກ້ວ
## ວ່າດ້ວຍ ການອອກໃບຕາດິນ, ການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນໃນທົ່ວແຂວງ.

- ອີງຕາມ: ກົດໝາຍ ວ່າດ້ວຍທີ່ດິນ ສະບັບເລກທີ 04 / ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ: ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012.
- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ວ່າດ້ວຍ ການ ແບ່ງຕົວເລກຂຶ້ນທະບຽນອອກໃບຕາດິນຂອບເຂດທົ່ວປະເທດ ສົກປີ 2018 ເລກທີ 0123/ກຊສ, ລົງວັນທີ 16 ມັງກອນ 2018.
- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ເລກທີ 68 / ສພຊ, ລົງວັນທີ 14 ທັນວາ 2015.

ເພື່ອເຮັດໃຫ້ການຂຶ້ນທະບຽນອອກໃບຕາດິນໄດ້ຖືກນຳໄປຈັດຕັ້ງປະຕິບັດຢູ່ບັນດາເມືອງໃຫ້ສາມາດໄດ້ຕາມຕົວເລກແຜນການທີ່ວາງໄວ້, ພ້ອມກັນນັ້ນ ກໍ່ເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນເຂົ້າສູ່ລະບຽບ, ຖືກຕ້ອງຕາມກົດໝາຍ, ເຮັດໃຫ້ທີ່ດິນມີຄວາມຍືນຍົງ, ມີປະສິດທິຜົນບໍ່ສ້າງຄວາມເສຍຫາຍໃຫ້ແກ່ທີ່ດິນ ແລະ ສິ່ງແວດລ້ອມ, ເພື່ອເຮັດໃຫ້ການຄຸ້ມຄອງນຳໃຊ້ທີ່ດິນໃຫ້ມີຄວາມເປັນເອກະພາບກັນໃນແຕ່ລະເມືອງ.

**ເຈົ້າແຂວງ ແຂວງບໍ່ແກ້ວອອກຄຳສັ່ງ:**

1. ໃຫ້ທ່ານເຈົ້າເມືອງ, ຮອງເຈົ້າເມືອງ ເອົາໃຈໃສ່ໃກ້ຊິດຕິດແທດກັບ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ໃຫ້ສ້າງແຜນໃນການລົງພິສູດຫລັກຖານອອກໃບຕາດິນໃນບ້ານເປົ້າໝາຍໃນເມືອງຂອງຕົນໃຫ້ໄດ້ຕາມຕົວເລກທີ່ທາງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ມອບໝາຍໃຫ້, ພ້ອມກັນນັ້ນກໍ່ໃຫ້ເອົາວຽກເກັບກຳສຳມະໂນທີ່ດິນໄປພ້ອມກັນ, ໃຫ້ຮີບຮ້ອນລົງປະຊາສຳພັນ ແລະ ລົງວັດແທກ ໃນບ້ານເປົ້າໝາຍໂດຍໄວ.
2. ໃຫ້ເຈົ້າເມືອງ, ຮອງເຈົ້າເມືອງ ເອົາໃຈໃສ່ຊີ້ນຳວຽກງານການເມືອງແນວຄິດ ໃຫ້ແກ່ພະນັກງານທີ່ຈະລົງສຳຫລວດວັດແທກ ແລະ ອຳນາດການປົກຄອງບ້ານ, ພໍ່ແມ່, ປະຊາຊົນໃນບ້ານເປົ້າໝາຍການອອກໃບຕາດິນໃຫ້ຮັບຮູ້, ເຂົ້າໃຈຕໍ່ຄວາມສຳຄັນຂອງໃບຕາດິນ, ເຂົ້າຮ່ວມໃນການວັດແທກ ແລະ ໃຫ້ຂໍ້ມູນກ່ຽວກັບທີ່ດິນຂອງຕົນແກ່ພະນັກງານທີ່ລົງວັດແທກຕົວຈິງຢູ່ພາຍໃນບ້ານດັ່ງກ່າວ.

3. ຊີ້ນຳຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ຂຶ້ນແຜນລາຍຮັບລາຍຈ່າຍໃນການອອກໃບຕາດິນແຕ່ລະປີ, ນັບແຕ່ປີ 2018 ເປັນຕົ້ນໄປ ເພື່ອເປັນຂໍ້ມູນພື້ນຖານ ໃນການຈັດຮັບຈັດຈ່າຍລາຍຮັບດ້ານວິຊາການນຳຂະແໜງການເງິນ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍງົບປະມານ ພ້ອມກັນນັ້ນ ກໍ່ໃຫ້ຊີ້ນຳຫ້ອງການການເງິນເມືອງໃຫ້ຫ້ອງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມເມືອງສາມາດຈັດຮັບຈັດຈ່າຍເງິນລາຍຮັບວິຊາການວັດແທກໄດ້ 100% ຕາມການຕົກລົງຂອງສອງກະຊວງ.

4. ໃຫ້ເຈົ້າເມືອງ ຍຸດຕິການຫັນສິດນຳໃຊ້ທີ່ດິນລັດໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ, ຖ້າຫາກມີຄວາມຈຳເປັນຕ້ອງໄດ້ມີການກວດກາ ແລະ ສະເໜີຫາຂັ້ນເທິງເພື່ອພິຈາລະນາ, ພ້ອມກັນນັ້ນ ກໍ່ໃຫ້ກວດກາຄືນການຈັດສັນທີ່ດິນ, ມອບດິນໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆຜ່ານມາມີຈັກເຂດ, ຈັກບ້ານ ແລະ ຈັກຕອນ ແລ້ວລາຍງານຂັ້ນເທິງ.

5. ໃຫ້ທ່ານເຈົ້າເມືອງ ຊີ້ນຳບັນດາບ້ານຫ້າມບໍ່ໃຫ້ເອົາດິນລັດ, ດິນລວມໝູ່, ດິນປ່າສະຫງວນ, ປ່າຊົມໃຊ້ຂອງບ້ານມອບໃຫ້ບຸກຄົນນຳໃຊ້,ໃຫ້ເຊົ່າ ຫລື ສຳປະທານລວມໄປເຖິງການເອົາທີ່ດິນລັດທີ່ດິນລວມໝູ່ ແລະ ດິນປ່າສະຫງວນ, ປ່າຊົມໃຊ້ຂອງບ້ານ ແລກປ່ຽນກັບໂຄງການກໍ່ສ້າງຕ່າງໆໂດຍເດັດຂາດ.

6. ໃຫ້ທ່ານເຈົ້າເມືອງ ຊີ້ນຳໃຫ້ຂະແໜງການທີ່ກ່ຽວຂ້ອງຂອງເມືອງຄື ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ຫ້ອງການກະສິກຳເມືອງ ກວດກາຄືນການຫັນປ່ຽນດິນໂດຍບໍ່ໄດ້ຮັບອານຸຍາດ ພ້ອມທັງ ໂຄສະນາເຜີຍແຜ່ບັນດານິຕິກຳຕ່າງໆ ໃຫ້ແກ່ອຳນາດການປົກຄອງບ້ານ ແລະ ປະຊາຊົນໃຫ້ຮັບຮູ້ ແລະ ເຂົ້າໃຈ ຕໍ່ຂັ້ນຕອນການຫັນປ່ຽນທີ່ດິນ ແລະ ການເສຍພັນທະຕ່າງໆຈາກການຫັນປ່ຽນທີ່ດິນ.

7. ໃຫ້ເມືອງ ຍຸດຕິການເອົາທີ່ດິນຂອງລັດໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ນັກລົງທຶນພາຍໃນ ແລະ ຕ່າງປະເທດເຊົ່າ ແລະ ສຳປະທານຢ່າງເດັດຂາດ ຖ້າຫາກບໍ່ໄດ້ຮັບອານຸຍາດຈາກເຈົ້າແຂວງ, ໃຫ້ເອົາໃຈໃສ່ກວດກາຄືນການອະນຸຍາດເຊົ່າ ແລະ ສຳປະທານທີ່ດິນໃນເມືອງຂອງຕົນ ໃນໄລຍະຜ່ານມາ.

8. ຊີ້ນຳຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ແລະ ຫ້ອງການການເງິນເມືອງ ສ້າງແຜນໃນການເກັບກຳຂໍ້ມູນສະຖິຕິທີ່ດິນ ໃນເມືອງຂອງຕົນຄືນໃໝ່ທັງໝົດ ເພື່ອເປັນຂໍ້ມູນພື້ນຖານໃນການສົມທຽບການຈັດເກັບລາຍຮັບຈາກຄ່າທຳນຽມນຳໃຊ້ທີ່ດິນ (ພາສີທີ່ດິນ).

9. ມອບໃຫ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ບັນດາເມືອງ ແລະ ພາກສ່ວນກ່ຽວຂ້ອງ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ໃຫ້ມີຜົນສຳເລັດ.

10. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງພິມລົງໃນຈົດໝາຍເຫດທາງລັດຖະການ 15 ວັນ (ສິບຫ້າ) ເປັນຕົ້ນໄປ.

ເຈົ້າແຂວງ ແຂວງບໍ່ແກ້ວ.

ແຂວງ ບໍ່ແກ້ວ
ເຈົ້າແຂວງ

ປອ ຄຳພັນ ເຜີຍຍະວົງ

ບ່ອນສົ່ງ:

- ພະແນກການທີ່ກ່ຽວຂ້ອງ 1 ສະບັບ.
- ບັນດາເມືອງ 1 ສະບັບ.
- ຫ້ອງວ່າການແຂວງ 1 ສະບັບ.
- ສະພາປະຊາຊົນແຂວງ 1 ສະບັບ.
- ສຳເນົາ 1 ສະບັບ.